**ມິຊຊາອາທິດທີ 4 ກຳນົດປາສກາ**

**ວັນທີ 8 ພຶດສະພາ 2022**



**ພຣະວໍລະສານໂດຍນັກບຸນຢວງ 10, 27-30**

ໃນເວລານັ້ນ, ພຣະເຢຊູເຈົ້າກ່າວວ່າ: ແກະເຮົາຟັງສຽງຂອງເຮົາ. ເຮົາຮູ້ຈັກແກະເຮົາແລະມັນມານຳເຮົາ. ເຮົາປະທານຊີວິດນິລັນດອນໃຫ້ມັນແລະມັນຈະບໍ່ຕາຍເລີຍ ແລະບໍ່ມີໃຜມາຍາດເອົາມັນໄປຈາກມືເຮົາໄດ້. ສິ່ງທີ່ພຣະບິດາໄດ້ປະທານໃຫ້ເຮົານັ້ນປະເສີດກວ່າທຸກຢ່າງແລະບໍ່ມີໃຜຍາດເອົາສິ່ງນັ້ນໄປຈາກມືພຣະບິດາຂອງເຮົາໄດ້. ພຣະບິດາຂອງເຮົາແລະເຮົາເປັນໜຶ່ງດຽວກັນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວັນນີ້ເປັນວັນທີ່ພຣະກຣິສຕະຈັກເຊີນຊວນພວກເຮົາທຸກຄົນພາວະນາໃຫ້ທຸກກະແສຮຽກໃນໂລກ. ເມື່ອເວົ້າເຖິງກະແສຮຽກ, ສ່ວນຫລາຍພວກເຮົາມັກຈະຄິດຫາກ່ອນອື່ນໝົດແມ່ນກະແສຮຽກເປັນນັກບວດ: ຄຸນພໍ່, ຄຸນແມ່. ຈາກນັ້ນກໍແມ່ນກະແສຮຽກຂອງການສ້າງຄອບຄົວ. ແຕ່ພວກເຮົາລືມໄປວ່າກະແສຮຽກທໍາອິດຂອງພວກເຮົາແຕ່ລະຄົນຄືການເປັນລູກຂອງພຣະເຈົ້າ. ພວກເຮົາທຸກຄົນຖືກສ້າງມາແລະຖືກຮຽກເອີ້ນໃຫ້ມີຊີວິດແລະແມ່ນຊີວິດຢູ່ຮ່ວມກັບພຣະເປັນເຈົ້າຕະຫລອດໄປ. ນີ້ແລແມ່ນກະແສຮຽກສໍາຄັນຂອງພວກເຮົາແຕ່ລະຄົນບໍ່ວ່າຈະເປັນນັກບວດຫລືຄາລະວາດ. ແຕ່ຄໍາວ່າກະແສຮຽກມີຄວາມໝາຍແນວໃດ?

ກະແສຮຽກກ່ອນອື່ນໝົດແມ່ນສຽງຮຽກເອີ້ນແລະການຕອບຮັບ. ມະນຸດແຕ່ລະຄົນລ້ວນແຕ່ມີກະແສຮຽກແຕກຕ່າງກັນ, ແຕ່ທຸກກະແສຮຽກລ້ວນແຕ່ມາຈາກພຣະເຈົ້າອົງດຽວ. ຖ້າພວກເຮົາຢາກຮູ້ຈັກວ່າຕົນມີກະແສຮຽກຫລືບໍ່ ສິ່ງສໍາຄັນຄືພວກເຮົາຕ້ອງຟັງສຽງຂອງພຣະເຈົ້າຜ່ານທາງວາຈາຂອງພຣະອົງ. ດັ່ງທີ່ພຣະເຢຊູເຈົ້າກ່າວໃນວັນນີ້: « ແກະເຮົາຟັງສຽງຂອງເຮົາ. ເຮົາຮູ້ຈັກແກະເຮົາແລະມັນມານໍາເຮົາ ». ເປັນຫຍັງຈຶ່ງຕ້ອງຟັງສຽງຂອງພຣະອົງ? ເພາະສຽງຂອງພຣະອົງຈະນໍາພວກເຮົາໄປບົນເສັ້ນທາງອັນຖືກຕ້ອງ. ສຽງຂອງພຣະອົງຈະສິດສອນພວກເຮົາໃຫ້ພົບກັບຄວາມຈິງໃນຊີວິດ. ແລະສຽງຂອງພຣະອົງຈະທໍາໃຫ້ພວກເຮົາພົບກັບຄວາມສຸກໃນສິ່ງທີ່ພວກເຮົາເລືອກແລະກະທໍາ. ເພາະສິ່ງທີ່ພຣະເຢຊູເຈົ້າປາດຖະໜາສໍາລັບພວກເຮົາແຕ່ລະຄົນຄືໃຫ້ພວກເຮົາໄດ້ມີຄວາມສຸກແລະຊີວິດ. ແລະແມ່ນຊີວິດທີ່ເກີດດອກອອກຜົນ.

ແລະສິ່ງສໍາຄັນໃນທຸກກະແສຮຽກກໍຄື ຄວາມຮັກແລະການຮັບໃຊ້. ທຸກກະແສຮຽກລ້ວນແຕ່ນໍາພວກເຮົາໄປສູ່ຄວາມຮັກ: ຮັກພຣະເຈົ້າແລະຮັກຄົນອື່ນ. ທຸກກະແສຮຽກກໍລ້ວນແຕ່ແມ່ນການຮັບໃຊ້: ຮັບໃຊ້ພຣະເຈົ້າແລະຮັບໃຊ້ເພື່ອນພີ່ນ້ອງຂອງພວກເຮົາ. ຢ່າງເຊັ່ນ: ກະແສຮຽກການເປັນພຣະສົງແລະນັກບວດແມ່ນເພື່ອຮັບໃຊ້ປະຊາກອນຂອງພຣະເຈົ້າດ້ວຍຄວາມຮັກ. ເຊັ່ນດຽວກັບກະແສຮຽກການສ້າງຄອບຄົວກໍແມ່ນຍ້ອນຄວາມຮັກລະຫວ່າງຄູ່ຜົວເມຍ. ແລະຄວາມຮັກນີ້ກໍສະທ້ອນໃຫ້ເຫັນເຖິງຄວາມຮັກຂອງພຣະເຢຊູເຈົ້າທີ່ມີຕໍ່ພຣະກຣິສຕະຈັກ, ອັນແມ່ນເຈົ້າສາວຂອງພຣະອົງ. ຄວາມຮັກລະຫວ່າງຄູ່ຜົວເມຍຊ່ວຍພວກເຂົາໃຫ້ຮູ້ຈັກອຸ້ມຊູຊ່ວຍເຫລືອເຊິ່ງກັນແລະກັນບົນເສັ້ນທາງແຫ່ງຊີວິດ. ສະຫລຸບແລ້ວ, ຈຸດທີ່ຄ້າຍຄືໃນທຸກກະແສຮຽກແມ່ນຄວາມຮັກແລະການຮັບໃຊ້. ແລະຕົວຢ່າງແຫ່ງຄວາມຮັກແລະການຮັບໃຊ້ທີ່ສົມບູນທີ່ສຸດແມ່ນພຣະເຢຊູເຈົ້ານັ້ນເອງ.

**ພາວະນາ**

ໂອພຣະເຢຊູເຈົ້າ, ໃນວັນອາທິດທີ່ພຣະກຣິສຕະຈັກພາວະນາໃຫ້ທຸກກະແສຮຽກໃນໂລກ, ໂຜດຊ່ວຍລູກໃຫ້ພົບກັບກະແສຮຽກທີ່ແທ້ຈິງຂອງຕົນຄືການເປັນລູກຂອງພຣະອົງແລະຢູ່ນໍາພຣະອົງຕະຫລອດຊີວິດຂອງລູກ. ເພື່ອລູກຈະໄດ້ພົບກັບຄວາມຮັກແລະຊີວິດອັນແທ້ຈິງທີ່ມາຈາກພຣະອົງດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ